ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------===== xxxx =====------

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0650 /ອຄ.ຄພນ.

ນະຄອນຫຼວງວຽງຈັນ,ວັນທີ 01 ເມສາ 2018.

# ຄຳສັ່ງ

ເຖິງ: ທ່ານຫົວໜ້າ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

ເລື່ອງ: ໃຫ້ຄຸ້ມຄອງການເກັບຊື້ສັດເປັນ (ງົວ, ຄວາຍ) ຢູ່ພາຍໃນແຂວງ, ນະຄອນຫຼວງ.

- ອີງຕາມ ມາດຕາ 6 ກ່ຽວກັບ ມາດຕະການຄຸ້ມຄອງລາຄາສິນຄ້າຂອງດຳລັດ, ເລກທີ 474/ນຍ, ລົງວັນທີ 18/11/2010, ໄດ້ກຳນົດໄວ້ວ່າ ໃນກໍລະນີທີ່ຈຳເປັນ, ອີງການຄຸ້ມຄອງລາຄາສິນຄ້າສາມາດນຳໃຊ້ມາດຕະການດັດສົມການສະໜອງ ແລະ ຄວາມຕ້ອງການໄດ້ ເພື່ອຄຸ້ມຄອງລາຄາສິນຄ້າໃຫ້ຢູ່ໃນສະພາບປົກກະຕິ;
- ສິນຄ້າສະບຽງອາຫານເປັນຕົ້ນແມ່ນຊີ້ນງົວ, ຊີ້ນຄວາຍ, ຊີ້ນໝູ ແລະ ປາ ເປັນສິນຄ້າຄວບຄຸມລາຄາຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງ, ເລກທີ 1064/ອຄ.ຄພນ, ລົງວັນທີ 4 ມິຖຸນາ 2012,

ເພື່ອຮັກສາສະຖຽນລະພາບທາງດ້ານເສດຖະກິດໃຫ້ໝັ້ນຄົງ, ບໍ່ໃຫ້ມີຜົນກະທົບໄປສູ່ບັນຫາອື່ນ ທີ່ຈະກາຍເປັນການຫຍໍ້ທໍ້ໃນສັງຄົມ, ຫລີກລ້ຽງການເອົາລັດເອົາປຽບຈາກພໍ່ຄ້າມີກາງ ທີ່ສ້າງຄວາມປັ່ນປ່ວນທາງດ້ານລາຄາ, ຮັບປະກັນໃຫ້ມີສັດສະໜອງໃຫ້ຕະຫລາດພາຍໃນປະເທດມີຢ່າງພຽງພໍ,

**ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳສັ່ງ:**

1. ໃຫ້ເພີ່ມທະວີຄວາມເອົາໃຈໃສ່ໃນການຄຸ້ມຄອງ ແລະ ຕິດຕາມ-ກວດກາ ການເກັບຊື້ສັດ ງົວ-ຄວາຍ ຢ່າງເຂັ້ມງວດ. ບໍ່ອະນຸຍາດໃຫ້ພໍ່ຄ້າ-ແມ່ຄ້າ, ຊາວຕ່າງປະເທດ ທີ່ບໍ່ມີອະນຸຍາດ ຫຼື ທະບຽນໂດຍຖືກຕ້ອງເຂົ້າມາເກັບຊື້ສັດເປັນ (ງົວ, ຄວາຍ) ແລ້ວສົ່ງອອກຄືໄລຍະທີ່ຜ່ານມາ, ຈະແມ່ນການເກັບຊື້ດ້ວຍຮູບແບບຕ່າງປະເທດມາເລາະເກັບຊື້ເອງ, ເອົາທຶນໃຫ້ຜູ້ຕາງໜ້າ ຫຼື ບຸກຄົນໃດໜຶ່ງພາຍໃນ ທີ່ບໍ່ມີໃບທະບຽນໂດຍຖືກຕ້ອງເລາະເກັບຊື້ໃຫ້, ຊຶ່ງເປັນສາເຫດເຮັດໃຫ້ບໍ່ມີຄວາມສະຫງົບ ແລະ ຂາດຄວາມເປັນລະບຽບຮຽບຮ້ອຍຢູ່ໃນສັງຄົມ ຍ້ອນມີການປັ່ນປ່ວນແກ້ງແຍ້ງລາຄາເກັບຊື້, ຖ້າພົບເຫັນ

2- ໃຫ້ເປັນເຈົ້າການ ໃນການຄຸ້ມຄອງລາຄາສິນຄ້າສະບຽງອາຫານປະເພດຊີ້ນ(ໝູ, ງົວ, ຄວາຍ, ໄກ່, ປາ) ແລະ ພືກຜັກຕ່າງໆ ທີ່ມີຄວາມຈຳເປັນ ຢູ່ພາຍໃນທ້ອງຖິ່ນຂອງຕົນ ໃຫ້ເປັນໄປຕາມກົນໄກຕະຫຼາດໃນແຕ່ລະໄລຍະ, ບົນພື້ນຖານ ການຄິດໄລ່ໂຄງປະກອບລາຄາໃນແຕ່ລະຂອດຢ່າງຊັດເຈນ(ລາຄາຕົ້ນທຶນ, ຂາຍຍົກ ແລະຂາຍຍ່ອຍ).

- ສະເພາະສິນຄ້າປະເພດຊີ້ນ ແມ່ນໃຫ້ເອົາໃຈໃສ່ຄຸ້ມຄອງຂອດນາຍຮ້ອຍ ແລະ ຂອດລູກຊຽງ ໃຫ້ໄດ້;

- ສ່ວນສິນຄ້າ ປະເພດພືດຜັກ, ສະບຽງອາຫານຕ່າງໆ ແມ່ນໃຫ້ເອົາໃຈໃສ່ຕິດຕາມ ແລະ ຄຸ້ມຄອງ ຂອດເກັບຊື້ ຈາກຊາວກະສິກອນ, ຂອດຂາຍຍົກ ແລະ ຂາຍຍ່ອຍ ຫຼື ຂອດບໍລິການ ເພື່ອຫຼີກເວັ້ນປັດໃຈສວຍໂອກາດ;

3- ໃຫ້ເປັນເຈົ້າການໃນການເຜີຍແຜ່ ແລະ ຊີ້ນຳບັນດາຜູ້ປະກອບການ ກ່ຽວກັບການຈັດຕັ້ງປະຕິບັດ ຕາມທິດຊີ້ນຳຂອງຂັ້ນເທິງ ແລະ ບັນດານິຕິກຳ ທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງລາຄາສິນຄ້າໃຫ້ທົ່ວເຖິງ ແລະ ປະຕິບັດຢ່າງເຂັ້ມງວດ ພ້ອມທັງ ລະດົມ, ຊຸກຍູ້ໃຫ້ເຂົາເຈົ້າ ສະໜອງສິນຄ້າປະເພດສະບຽງອາຫານທີ່ຈຳເປັນດັ່ງກ່າວ ໃຫ້ພຽງພໍກັບຄວາມຕ້ອງການຂອງຕະຫຼາດ ໃນໄລຍະເທດສະການບຸນປີໃໝ່ລາວ;

4- ໃຫ້ເປັນເຈົ້າການ ໃນການຕິດຕາມ ກວດກາ ຢ່າງເປັນປະຈຳໃນທ້ອງຕະຫລາດຫຼັກໆ ພາຍໃນທ້ອງຖິ່ນຂອງຕົນ ດ້ວຍການແຕ່ງຕັ້ງໝູນວຽນພະນັກງານລົງໄປ ຕິດຕາມ, ກວດກາ ແລະ ຊີ້ນຳ ເປັນປະຈຳ;

5- ໃຫ້ຈັດຕັ້ງປະຕິບັດ ແລະ ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນໄລຍະບຸນປີໃໝ່ລາວ ກ່ຽວກັບການຄຸ້ມຄອງລາຄາສິນຄ້າປະເພດດັ່ງກ່າວ ຢູ່ພາຍໃນທ້ອງຖິ່ນຂອງຕົນ ດ້ວຍຄວາມຮັບຜິດຊອບສູງ;

6- ໃຫ້ລາຍງານຜົນການຈັດຕັ້ງປະຕິບັດໃນວຽກງານດັ່ງກ່າວ ເຖິງກະຊວງອຸດສາຫະກຳ ແລະ ການຄ້າ (ກົມການຄ້າພາຍໃນ) ໃນເວລາອັນຄວນ ຖ້າຫາກມີສະພາບການເກີດຂຶ້ນ ເພື່ອພ້ອມກັນແກ້ໄຂບັນຫາໄດ້ທັນການ.

ດັ່ງນັ້ນ, ຈຶ່ງແຈ້ງການມາເພື່ອຊາບ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະການຄ້າ

**<u>ສຳເນົາສົ່ງ:</u>**

1- ຄະນະນຳກະຊວງ ອຄ 03 ສະບັບ " ເພື່ອລາຍງານ "

2- ບັນດາກົມ, ຫ້ອງການ, ສະຖາບັນ ອ້ອມຂ້າງກະຊວງ " ເພື່ອຊາບ, ຕິດຕາມ ແລະ ປະຕິບັດ "

3- ສຳເນົາ

ກະຊວງອຸດສາຫະກຳ ແລະ ການຄ້າ

ລັດຖະມົນຕີ

**ດຣ. ນາມ ວິຍະເກດ**